# ການບໍລິການທີ່ມີໄວ້ໃຫ້ຈາກພະແນກ DVR

ພະແນກ DVR ໄດ້ເອື້ອເຟື້ອການບໍລິການກວ້າງຂວາງຫລາຍໆຢ່າງເພື່ອຈະຊ່ວຍເຫລືອທ່ານໃຫ້ຕຽມພ້ອມສໍາລັບ, ໄດ້ຮັດ, ແລະ ຮັກສາວຽກງານໄວ້.ການບໍລິການທີ່ທ່ານໃຊ້ຈະຂື້ນກັບຄວາມຕ້ອງການ ແລະ ສະພາບການສ່ວນບຸກຄົນຂອງທ່ານ. ພະແນກ DVR ສາມາດເອົາໃຫ້ທ່ານດ້ວຍລາຍລະອຽດທີ່ຈໍາເປັນເພື່ອຈະຊ່ວຍເຫລືອທ່ານໃນການຕັດສິນໃຈວ່າການບໍລິການແນວໃດແດ່ທີ່ທ່ານຕ້ອງການເພື່ອຈະບັນລຸເປົ້າຫມາຍວຽກງານຂອງທ່ານ. ສິ່ງເຫລົ່ານີ້ຈະລວມເອົາ:

**ການບໍລິການດ້ານການຕີຣາຄາປະເມີນຜົນ** ເພື່ອຈະວັດແທກຄວາມເຂັ້ມແຂງຂອງທ່ານ, ຄວາມສາມາດ, ຄວາມຊໍານານນໍາວຽກງານ ແລະ ຄວາມສົນໃຈຂອງທ່ານ ແລະຊ່ວຍເຫລືອທ່ານໃນການເລືອກເອົາຈຸດມຸ່ງຫມາຍວຽກງານ ແລະ ການບໍລິການອູ້ມຊູຂອງພະແນກ DVR ເພື່ອຈະບັນລຸເປົ້າຫມາຍນັ້ນ.



**ການບໍລິການດ້ານການວາງແຜນໃນເງິນຊ່ວຍເຫລືອ**ມີໄວ້ໃຫ້ຈະຊ່ວຍເຫລືອທ່ານໃຫ້ເຂົ້າໃຈວ່າການເຮັດວຽກສາມາດສະທ້ອນເຖິງການຊ່ວຍເຫລືອເງິນເສັຽອົງຄະຫລືການຊ່ວຍເຫລືອພະຍາບານ (ເຊັ່ນເງິນວ່າເງິນຄວາມປອດພັຍເພີ້ມເຕີມຫລືເງິນປະກັນພັຍຄວາມເສັຽອົງຄະຂອງສັງຄົມ) ທີ່ທ່ານໄດ້ຮັບ.

**ການບໍລິການດ້ານການໃຫ້ຄໍາປຶກສາ ແລະ ການຊີ້ນໍາ**ໄດ້ຖືກເອົາໃຫ້ຕລອດການດໍາເນີນການຝຶກຝົນໃຫ້ດີຄືນເພື່ອຈະຊ່ວຍເຫລືອທ່ານທໍາການຕັດສິນທີ່ດີກ່ຽວກັບວ່າຈະບັນລຸເຖິງເປົ້າຫມາຍຂອງທ່ານໄດ້ຢ່າງໃດ.

**ການບໍລິການດ້ານການດໍາຣົງຊີວິດຢ່າງເປັນເອກຣາດ**ຊ່ວຍເຫລືອທ່ານໃຫ້ເຂົ້າໃຈອຸບປະສັກຕໍ່ຄວາມເສັຽອົງຄະຊຶ່ງຫລີກລ້ຽງທ່ານຈາກການເຮັດວຽກ. ສິ່ງເຫລົ່ານີ້ຈະລວມເອົາ, ແຕ່ບໍ່ຈໍາກັດໄປເຖິງ:

- ການຝຶກຝົນນໍາການຄວບຄຸມນໍາເວລາ.
- ການຝຶກຝົນນໍາການເຂົ້າໃຈຂອບເຂດຂອງຄວາມເສັຽອົງຄະ.
- ການເຂົ້າເຖິງແຫລ່ງຊ່ວຍເຫລືອຕາມຊຸມຊົນ.

**ການບໍລິການດ້ານວິທະຍາການຊ່ວຍເຫລືອ** ຊ່ວຍເຫລືອທ່ານຕັດອອກໄປສິ່ງກີດກັ້ນທາງດ້ານການຕິດຕໍ່ສື່ສານແລະ/ຫລືທາງດ້ານຮ່າງກາຍຊຶ່ງອາດຈະກີດກັ້ນທ່ານຈາກການໄດ້ວຽກເຮັດຫລືການຮັກສາວຽກໄວ້. ສິ່ງເຫລົ່ານີ້ຈະລວມເອົາອຸບປະກອນເຊັ່ນວ່າເຄື່ອງຊ່ວຍຟັງສຽງ, ເຄື່ອງຊ່ວຍເບິ່ງ, ຫລື ຊອບແວຣ໌ຄອມພິວເຕີພິເສດ. ທ່ານສາມາດສະແວງຫາໄດ້ນໍາຜູ້ໃຫ້ຄໍາປຶກສາຂອງທ່ານກ່ຽວກັບວ່າວິທະຍາການອາດຈະຊ່ວຍເຫລືອທ່ານໃຫ້ບັນລຸເປົ້າຫມາຍວຽກງານຂອງທ່ານໄດ້ແນວໃດ.

**ການຝຶກຝົນວິຊາຊີບ,ການສຶກສາຫລັງຈາກຊັ້ນມັທຍົມແລະການຝຶກຝົນວຽກງານ** ໂອກາດທີ່ຈະຊ່ວຍເຫລືອທ່ານກໍ່ສ້າງຄວາມຊໍານານແລະສອດຄ່ອງນໍາຄຸນສົມບັດ.



**ການບໍລິການດ້ານການຈັດຫາວຽກງານ** ຈະຊ່ວຍເຫລືອທ່ານທໍາການຊອກວຽກງານຂອງທ່ານ, ລວມທັງ:

- ການຊ່ວຍເຫລືອໃນການຂຽນປະກອບໃບຟອມຄໍາຮ້ອງ.
- ການອອກແບບໃບປະວັດວຽກງານ.
- ການຝຶກແອບວິທີການສໍາພາດ, ແລະ ການຊີ້ບອກຫົນທາງໄປສູ່ວຽກງານ.

**ຊາວຫນຸ່ມແລະການບໍລິການຜັນປ່ຽນຕໍ່ມາ HS** ເພື່ອຈະຊ່ວຍທ່ານໃຫ້ຕຽມພ້ອມໃນການຜັນປ່ຽນຈາກຣາຍສະກຸນໄປສູ່ບ່ອນເຮັດວຽກ.

## ວັດຖຸປະສົງ

ການປ່ຽນແປງຊີວິດໂດຍການຊ່ວຍເຫລືອບຸກຄົນທີ່ມີຄວາມເສັຽອົງຄະໃຫ້ເຂົ້າຮ່ວມຢ່າງເຕັມເມັດເຕັມຫນ່ວຍຢູ່ໃນຊຸມນຸມຊົນຂອງເຂົາເຈົ້າໂດຍຜ່ານວຽກງານທີ່ມີຄວາມຫມາຍ.

## ຈິນຕະນາການ

ນັກຮຽນ,ຊາວຫນຸ່ມຣລະຜູ້ໃຫຍ່ທີ່ມີຄວາມເສັຽອົງຄະໄດ້ຖືກໃຫ້ມີພະລັງທີ່ຈະຝັນໃຫຍ່ ແລະບັນລຸຜົນສໍາເຣັດໃນເປົ້າຫມາຍວຽກງານຂອງເຂົາເຈົ້າ.

## ຄຸນຄ່າ

- **ຄວາມບໍຣິສຸດຜຸດຜ່ອງ** ຜ່ານການຕິດຕໍ່ສື່ສານທີ່ແຈ່ມແຈ້ງ, ຈິງໃຈນໍາລູກຄ້າ, ພະນັກງານ, ແລະເພື່ອນຮ່ວມງານ.
- ປະຕິບັດງານດ້ວຍ **ຄວາມຊື່ສັດ,** ຖືເອົາຫລັກຈາຣິຍະທັມແລະຄຸນຄ່າຂອງອາຊີບຂອງພວກເຮົາ.
- ສົ່ງເສີມປະເພນີວັດທະນະທັມຂອງ **ການໃຫ້ອໍານາດ** ສໍາລັບລູກຄ້າແລະພະນັກງານ.
- ຄືບຫນ້າພາກປະຕິບັດດ້ານການເຮັດໃຫ້ດີຄືນຄືເກົ່າຜ່ານ **ຄວາມກ້າວຫນ້າ.**
- **ການປະສານງານຮ່ວມກັນ** ນໍາລູກຄ້າ,ພະນັກງານ,ແລະເພື່ອນຮ່ວມງານທີ່ມີຜົນຜະລິດອອກມາ.
- ມຸ່ງຫມັ້ນຕ **ຄວາມຫລາກຫລາຍເຜົ່າພັນ, ຄວາມຍຸຕິທັມ,ການເຂົ້າຫາ** ແລະ **ການລວມເຂົ້າໃສ່ນໍາກັນ** ຢູ່ໃນທຸກໆຮູບແບບເພື່ອບັນລຸຄວາມດີເດັ່ນ.

Washington State Department
of Social and Health Services
Division of Vocational Rehabilitation
PO Box 45340 • Olympia, WA 98504-5340
1-800-637-5627 • Washington Relay: 711
DVRCSR@dshs.wa.gov • dshs.wa.gov/dvr

ເອົາການບໍຣິການ DVR ໃຫ້ມາຕັ້ງແຕ່ 1933

ເງິນທຶນຂອງຣັດແລະຣັດຖະບານກາງ ໄດ້ຖືກໃຊ້ເພື່ອຈະໃຫ້ການບໍຣິການ DVR.
ໂຄງການ VR ໄດ້ຮັບເງິນທຶນຂອງຣັດຖະ ບານກາງປະມານ
78ເປີເຊັນແລະເງິນທຶນຂອງຣັດ 22 ເປີເຊັນ.
ເພື່ອຣາຍລະອຽດເພີ້ມເຕີມກ່ຽວກັບຈໍານວນເງິນຂອງ
ຣັດຖະບານກາງສໍາລັບໂຄງການ,ກະຣຸນາແວ່ປ່ຽມເຂົ້າປ່ຽມ
https://rsa.ed.gov/fiscal/grant-awards

DSHS 22-827 LA (Rev. 2/24) Laotian

# ຈ້າງເອົາຄວາມສາມາດຂອງທ່ານ



*Washington State Department of Social and Health Services Division of Vocational Rehabilitation*

Washington State Department of Social & Health Services
Transforming lives

# **DVR** ເໝາະສົມສຳລັບທ່ານບໍ່?

## ກ່ຽວກັບ **DVR**

DVR ແມ່ນແຫລ່ງຊ່ວຍເຫລືອທົ່ວຣັດທີ່ຊ່ວຍເຫລືອບຸກຄົນຜູ້ທີ່ມີຄວາມເສັຽອົງຄະເພື່ອຈະຕຽມພ້ອມ, ຊອກເອົາໃຫ້ໄດ້,ຮັກສາເອົາໄວ້,ຫລື ໃຫ້ໄດ້ວຽກເຮັດ. DVR ຮ່ວມມືນຳອົງການ ແລະ ກິຈການຄ້າເພື່ອຈະພັດທະນາອອກແບບແຜນໂອກາດວຽກງານ.

## **DVR** ຮັບໃຊ້ໃຜແດ່

ບຸກຄົນຜູ້ທີ່ຊອກຫາວຽກງານທີ່ສຳຄັນ, ຫມັ້ນຄົງແຕ່ວ່າຄວາມເສັຽອົງຄະຂອງບຸກຄົນນັ້ນອາດຈະເປັນຜົນເຖິງສິ່ງກີດກັ້ນແນວນຶ່ງຫລືຫລາຍແນວຕໍ່ການບັນລຸຜົນສຳເຣັດໃນເປົ້າຫມາຍວຽກງານ.

## **DVR** ສາມາດຊ່ວຍເຫລືອທ່ານໃຫ້ໄປເຮັດວຽກໄດ້

ພະນັກງານຂອງ DVR ຈະຊ່ວຍເຫລືອທ່ານໃຫ້ໄດ້ຮັບລາຍລະອຽດທີ່ທ່ານຕ້ອງການເພື່ອຈະທຳການຕັດສິນໃຈທີ່ດີກ່ຽວກັບ:

- ວຽກງານຊະນິດໃດທີ່ທ່ານຕ້ອງການ.
- ຂັ້ນຕອນທີ່ຕ້ອງການເພື່ອຈະບັນລຸເປົ້າຫມາຍວຽກງານຂອງທ່ານ.



ດ້ວຍການອູ້ມຊູຈາກ DVR, ທ່ານຈະ:

- ອອກແບບແຜນແລະວາງໃຊ້ແຜນການ ເປັນຂັ້ນຕໍ່ຂັ້ນເພື່ອຈະບັນລຸເປົ້າຫມາຍວຽກ ງານຂອງທ່ານ.

# ການດຳເນີນການເຮັດໃຫ້ດີຄືນຄືເກົ່າ

## ຄຳຮ້ອງຂໍ



- DVR ຈະເອົາລາຍລະອຽດໃຫ້ທ່ານກ່ຽວກັບການບໍຣິການດ້ານການເຮັດໃຫ້ວິຊາຊີບດີຄືນຄືເກົ່າ.
- ທ່ານຕ້ອງໄດ້ຂຽນປະກອບໃບຄຳຮ້ອງຂໍນຳ DVR ກ່ອນທີ່ການບໍຣິການຈະສາມາດເລີ້ມຕົ້ນໄດ້.
- ໃບຄຳຮ້ອງຂໍຂອງທ່ານຈະຖືກກວດເບິ່ງຄືນໂດຍຜູ້ປຶກສາຂອງ DVR ເພື່ອຈະພິຈາຣະນາເບິ່ງວ່າທ່ານມີເງື່ອນໄຂໄດ້ຮັບ ການບໍຣິການຂອງDVR ຫລື ບໍ່.

## ເງື່ອນໄຂຮັບເອົາ

ທ່ານມີເງື່ອນໄຂໄດ້ຮັບການບໍຣິການຂອງ DVR ຖ້າຫາກວ່າທ່ານ:

- ມີຄວາມເສັຽອົງຄະທາງດ້ານຮ່າງກາຍ, ມັນສະມອງ ຫລື ຄວາມຮູ້ສຶກຊຶ່ງເປັນຜົນເຖິງສິ່ງກີດກັ້ນອັນຍິ່ງໃຫຍ່ຕໍ່ວຽກງານ.
- ທ່ານຕ້ອງມີການບໍຣິການເຮັດໃຫ້ອາຊີບດີຄືນຄືເກົ່າເພື່ອຈະໄດ້ວຽກເຮັດ ຫລື ຮັກສາວຽກງານໄວ້.
- ທ່ານ ສາມາດທີ່ຈະເຮັດວຽກໄດ້ເນື່ອງເປັນຜົນອອກມາຈາກການໄດ້ຮັບການບໍຣິການຂອງ DVR.

ຄະນະທີມງານປຶກສາຂອງ DVR ຂອງທ່ານຈະເກັບກຳເອົາປະວັດເພື່ອຈະບັນທຶກເອກະລັກປະຈຳຕົວຂອງທ່ານ, ຄວາມເສັຽອົງຄະ, ແລະ ສະພາບວຽກງານ. ຖ້າຫາກວ່າບໍ່ມີປະວັດກ່ຽວກັບຄວາມເສັຽອົງຄະຂອງທ່ານຢູ່, ທ່ານອາດຈະຕ້ອງໄດ້ເຮັດການກວດພະຍາບານ ຫລື ການກວດພະຍາດເພື່ອຈະພິສູດ ຫລື ອູ້ມຊູເງື່ອນໄຂໄດ້ຮັບ.

## ລາຍຊື່ລໍຖ້າ

ຖ້າຫາກວ່າ DVR ບໍ່ສາມາດຮັບໃຊ້ບຸກຄົນຜູ້ທີ່ມີເງື່ອນໄຂໄດ້ຮັບທຸກໆຄົນຍ້ອນຂອງເຂດຂອງເງິນທຶນ, ເຂົາເຈົ້າຈະກໍ່ຕັ້ງລາຍຊື່ລໍຖ້າສຳລັບການບໍຣິການຂຶ້ນມາ. ຕາມກົດຫມາຍແລ້ວ, DVR ຕ້ອງຈັດໃຫ້ກ່ອນຫມູ່ການບໍຣິການໃຫ້ແກ່ບຸກຄົນຜູ້ທີ່ມີຄວາມເສັຽອົງຄະຮ້າຍແຮງທີ່ສຸດ.

ບຸກຄົນຈະຖືກຄັດເລືອກເອົາອອກຈາກລາຍຊື່ລໍຖ້າໂດຍອີງຕາມຄວາມຮ້າຍແຮງຂອງຄວາມເສັຽອົງຄະຂອງເຂົາເຈົ້າແລະວັນທີທີ່ເຂົາເຈົ້າໄດ້ຮ້ອງຂໍເອົາການບໍຣິການ.ຜູ້ປຶກສາ DVR ຈະພິຈາຣະນາເບິ່ງຄວາມຮ້າຍແຮງຂອງຄວາມເສັຽອົງຄະແລະຂະແນງຂອງຄວາມຮີບດ່ວນແລະແຈ້ງບອກທ່ານກ່ຽວກັບການພິຈາຣະນາເບິ່ງອັນນີ້ໃຫ້ເປັນພາກສ່ວນນຶ່ງຂອງການດຳເນີນການເບິ່ງເງື່ອນໄຂຮັບເອົາ.

## ການປະເມີນຜົນເບິ່ງວິຊາຊີບ

ທ່ານ ແລະ ຜູ້ປຶກສາ DVR ຂອງທ່ານຈະຄົ້ນຄວ້າຫາຊະນິດຂອງວຽກງານທີ່ເໝາະສົມກົງກັນກັບການປະເມີນຜົນເບິ່ງວິຊາຊີບຂອງທ່ານ. ທ່ານຈະກວດເບິ່ງຄືນ:

- ຄວາມເຂັ້ມແຂງ, ຄວາມສາມາດ ແລະ ຄວາມສົນໃຈຂອງທ່ານ;
- ປະວັດວຽກງານ ແລະ ຄວາມຊຳນານຂອງທ່ານ.
- ລາຍລະອຽດກ່ຽວກັບທິດທາງແນວໂນ້ມຂອງຕະລາດວຽກງານທ້ອງຖິ່ນ.

ຫລືວ່າ ທ່ານຈະເຮັດໃຫ້ແລ້ວ:

- ການກວດເບິ່ງຄວາມສົນໃຈ ແລະ/ຫລື ຄວາມຖະນັດເກັ່ງ.
- ການທົດລອງເຮັດວຽກເບິ່ງ.



## ແຜນການສຳລັບວຽກງານ

ຜູ້ປຶກສາ DVR ຂອງທ່ານຈະໃຫ້ການປຶກສາແລະ ຄຳຊີ້ນຳເພື່ອຈະອູ້ມຊູທ່ານໃນການອອກແບບແຜນການສຳລັບວຽກງານສ່ວນບຸກຄົນຂອງທ່ານ.ອັນນີ້ລວມເອົາ

- ການເລືອກເອົາເປົ້າຫມາຍຂອງວຽກງານ.
- ກ່າວເຖິງຂັ້ນຕອນແລະການບໍຣິການແນວໃດແດ່ທີ່ທ່ານຕ້ອງການເພື່ອຈະບັນລຸເປົ້າຫມາຍວຽກງານຂອງທ່ານ.
- ການເຮັດວຽກໃນກິຈກັມທີ່ຖືກກ່າວຢູ່ໃນແຜນການຂອງທ່ານ. ອັນນີ້ອາດຈະລວມເອົາ:
  - ການຝຶກຝົນ ແລະ ການສຶກສາ.
  - ການດຳເນີນການຊອກຫາວຽກ.
  - ການຄົ້ນຄ້ວາຫາແຫລ່ງຊ່ວຍເຫລືອທີ່ກ່ຽວພັນນຳວຽກງານແລະການສິ່ງຕໍ່.
  - ການຝຶກຝົນເຣື່ອງການຊອກວຽກ.
  - ປະວັດບຸກຄົນ ແລະ ວິທີການສຳພາດ.
  - ຄວາມຊ່ວຍເຫລືອນຳການຈັດໃສ່ວຽກງານ.
  - ການອູ້ມຊູໃນການຮັກສາວຽກງານໄວ້.

## ໄດ້ເຮັດວຽກຢ່າງເປັນຜົນສຳເຣັດ

- ຫລັງຈາກທີ່ທ່ານໄດ້ວຽກເຮັດແລ້ວ, DVR ຈະຮັກສາການຕິດຕໍ່ພົວພັນນຳທ່ານເປັນເວລາຢ່າງຫນ້ອຍ 90 ວັນເພື່ອຈະໃຫ້ແນ່ໃຈວ່າວຽກງານແມ່ນເປັນທີ່ເໝາະສົມກົງກັນທີ່ດີ.
- ຫລັງຈາກ 90 ວັນ, ຖ້າຫາກວ່າທ່ານເຮັດວຽກໄດ້ດີຢູ່ ແລະ ບໍ່ຕ້ອງການການບໍຣິການຢ່າງອື່ນ, ທ່ານ ແລະ ຜູ້ປຶກສາ DVR ຂອງທ່ານຈະຕົກລົງກັນວ່າຈະປິດສຳນວນເອກສານຂອງທ່ານລົງເມື່ອໃດ.

## ການສ່ຽງທັນທີຕໍ່ການສູນເສັຽວຽກງານ

- ການຖ້າຫາກວ່າທ່ານຢູ່ໃນການສ່ຽງທັນທີ ຕໍ່ການສູນເສັຽວຽກງານຂອງທ່ານຍ້ອນ ຄວາມເສັຽອົງຄະຂອງທ່ານ, DVR ອາດຈະ ສາມາດທີ່ຈະຊ່ວຍເຫລືອທ່ານດ້ວຍການບໍ ຣິການອັນເຈາະຈົງໃນອະນາຄົດໄກ້ໆນີ້ເພື່ອ ວ່າຈະຊ່ວຍເຫລືອທ່ານຮັກສາເອົາວຽກງານ ຂອງທ່ານໄວ້.